**ພແນກຝ່າຍບໍລິການ ການປິ່ນປົວໂຣກປະສາດ, ການໃຊ້ແລະຕິດທາດເຄມີ ຂອງຄິ່ງຄາວຕີ ຍິນດີຕ້ອນຮັບ ທ່ານສເມີ**

ພວກເຮົາມີໄວ້ຮັບໃຊ້ທ່ານ ການບໍລິການທີ່ມີຄຸນນະພາບສູງຝ່າຍການປິ່ນປົວໂຣກປະສາດແລະການໃຊ້ຢາເສດຕິດ ແກ່ບຸກຄົນທີ່ມີຣາຍໄດ້ຕໍ່າທີ່ມີຄວາມຕ້ອງການ. ພແນກຂອງພວກເຮົາມີໄວ້ຮັບໃຊ້ທ່ານການບໍລິການອັນກວ້າງ ຂວາງຫຼາຍໆຢ່າງ **ແກ່ບຸກຄົນທຸກໄວແລະທຸກຊົນຊາດຊົນເຜົ່າ.** ການບໍລິການຂອງພວກເຮົາປະກອບດ້ວຍການ ບໍລິການຝ່າຍສຸກເສີນ, ການປິ່ນປົວໂຣກປະສາດ, ການປິ່ນປົວຄົນຕິດຢາເສດຕິດ, ແລະການຊ່ວຍເຫຼືອນັກໂທດ. ພວກເຮົາໃຫ້ການບໍລິການທີ່ເປັນໜ້ານັບຖື, ຈັດໃຫ້ເຂົ້າຕາມຄວາມຕ້ອງການຂອງແຕ່ລະບຸກຄົນ, ແລະ ເໜືອກວ່າຍິ່ງອື່ນໝົດ, ແມ່ນການໄດ້ຜົນທີ່ດີ. ພແນກຝ່າຍບໍລິການ ການປິ່ນປົວໂຣກປະສາດ, ການໃຊ້ແລະຕິດ ທາດເຄມີຂອງຄິ່ງຄາວຕີ ເປັນພແນກນຶ່ງໃນສີ່ພແນກພາຍໃນກົມການບໍລິການແກ່ສາທາຣະນະ ແລະມະຫາຊົນ ໃນຄິ່ງຄາວຕີ.

**ຖ້າທ່ານມີຄວາມສົນໃຈໃນການທົບທວນເບິ່ງການບໍລິການປິ່ນປົວໂຣກປະສາດຂອງພວກເຮົາ, ກະຣຸນາ ໃຫ້ເບິ່ງ ແຜນການການປິ່ນປົວໂຣກປະສາດຂອງຄິ່ງຄາວຕີໃນພາສາອັນນີ້ ຫຼື ພາສາອື່ນໆໃດນຶ່ງທີ່ມີໄວ້ໃຫ້ທ່ານ. ແຜນການການປິ່ນປົວໂຣກປະສາດຂອງຄິ່ງຄາວຕີກໍມີໄວ້ຮັບໃຊ້ທ່ານໃນລະບົບອື່ນໆເຊັ່ນກັນ.**

**ຖ້າທ່ານຕ້ອງການຢາກເວົ້າກັບພວກເຮົາ, ກະຣຸນາໃຫ້ໂທຣະສັບຫາ CTS LanguageLink (ໂທບໍ່ເສັງຄ່າ) ທີ່ 1-800-208-2620. ອົງການນີ້ ຈະໂທຫາພວກເຮົາ ໃນຂນະທີ່ທ່ານຍັງລໍຢູ່ໃນໂທຣະສັບແລະເຂົາຈະຕິດຕໍ່ຫາ ຝ່າຍບໍລິການນາຍແປພາສາໃຫ້ທ່ານຢ່າງບໍ່ໄດ້ເສັງຄ່າ.**

ຂໍຂອບໃຈນໍາທ່ານທີ່ໃຫ້ຄວາມສົນໃນພແນກຝ່າຍບໍລິການ ການປິ່ນປົວໂຣກປະສາດ, ການໃຊ້ແລະຕິດທາດ ເຄມີ. ໃຫ້ທ່ານມີຄວາມຮູ້ສຶກສະບາຍໃຈໃນການຕິຊົມກ່ຽວກັບເວັບໄຊ້ໃໝ່ຂອງພວກເຮົາທີ່ mhsa@kingcounty.gov. ພວກເຮົາຈະລໍການສົ່ງຂ່າວມາຈາກທ່ານ!